ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

--------------------------

ຄະນະກໍາມະການແຫ່ງຊາດ ເພື່ອຕ້ານ
ການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ

ເລກທີ 09 /ຄຕຟງ

ນະຄອນຫຼວງວຽງຈັນ, ວັນທີ 30 MAR 2016

# ຂໍ້ຕົກລົງ
# ວ່າດ້ວຍມາດຕະການທາງບໍລິຫານ ຕໍ່ຜູ້ລະເມີດລະບຽບກົດໝາຍໃນຂົງເຂດ ວຽກງານຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ

- ອີງຕາມກົດໝາຍວ່າດ້ວຍ ການຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສະບັບເລກທີ 50/ສພຊ, ລົງວັນທີ 21 ກໍລະກົດ 2014;
- ອີງຕາມດໍາລັດວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງຄະນະກໍາມະການແຫ່ງຊາດ ເພື່ອຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສະບັບເລກທີ 364/ນຍ, ລົງວັນທີ 13 ຕຸລາ 2014;
- ອີງຕາມຄໍາສັ່ງວ່າດ້ວຍການກັກ, ການຍຶດ ແລະ ການອາຍັດ ທຶນທີ່ພົວພັນກັບຜູ້ກໍ່ການຮ້າຍ ຫຼື ການສະໜອງທຶນໃຫ້ແກ່ຜູ້ກໍ່ການຮ້າຍ ສະບັບເລກທີ 03/ນຍ, ລົງວັນທີ 11 ກຸມພາ 2016;
- ອີງຕາມການສະເໜີຂອງສໍານັກງານຂໍ້ມູນຕ້ານການຟອກເງິນ ສະບັບເລກທີ 244/ສຕຟງ, ລົງວັນທີ 25 ມີນາ 2016.

## ຄະນະກໍາມະການແຫ່ງຊາດ ເພື່ອຕ້ານ ການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ອອກຂໍ້ຕົກລົງ:

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກໍານົດມາດຕະການທາງບໍລິຫານ ຕໍ່ບຸກຄົນ, ນິຕິບຸກຄົນ ລວມທັງຫົວໜ່ວຍທີ່ມີໜ້າທີ່ລາຍງານທີ່ໄດ້ກໍານົດໄວ້ໃນ ກົດໝາຍວ່າດ້ວຍ ການຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ , ລະບຽບ ແລະ ແຈ້ງການຕ່າງໆ ຂອງຄະນະກໍາມະການແຫ່ງຊາດ ເພື່ອຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ແນໃສ່ສຶກສາອົບຮົມ ບຸກຄົນ, ນິຕິບຸກຄົນ ລວມທັງຫົວໜ່ວຍທີ່ມີໜ້າທີ່ລາຍງານ, ຍົກສູງສະຕິໃນການປະຕິບັດລະບຽບກົດໝາຍດັ່ງກ່າວ ຢ່າງເຂັ້ມງວດ ແລະ ເພື່ອເປັນບ່ອນອີງໃຫ້ແກ່ອົງການຄຸ້ມຄອງວຽກງານຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ໃນການຈັດຕັ້ງປະຕິບັດມາດຕະການທາງບໍລິຫານຕໍ່ບຸກຄົນ, ນິຕິບຸກຄົນ ລວມທັງຫົວໜ່ວຍທີ່ມີໜ້າທີ່ລາຍງານ ຢ່າງຖືກຕ້ອງ ແລະ ເປັນເອກະພາບ.

### ມາດຕາ 2 ມາດຕະການທາງບໍລິຫານ

ມາດຕະການທາງບໍລິຫານ ຕາມຂໍ້ຕົກລົງສະບັບນີ້ ແມ່ນ ການສຶກສາອົບຮົມ ບຸກຄົນ, ນິຕິບຸກຄົນ ລວມທັງຫົວໜ່ວຍທີ່ມີໜ້າທີ່ລາຍງານ ທີ່ໄດ້ລະເມີດລະບຽບກົດໝາຍໃນຂົງເຂດວຽກງານຕ້ານ ສະກັດກັ້ນ ການຟອກເງິນ ແລະ

ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຊຶ່ງການລະເມີດດັ່ງກ່າວ ເປັນການລະເມີດທີ່ເບົາບາງ ແລະ ບໍ່ສ້າງຜົນເສຍຫາຍຫຼວງຫຼາຍ ເຖິງແມ່ນວ່າການລະເມີດດັ່ງກ່າວ ຈະມີອົງປະກອບຂອງການກະທຳຜິດທາງອາຍາຢ່າງຄົບຖ້ວນກໍ່ຕາມ.

ມາດຕະການທາງດ້ານບໍລິຫານ ປະກອບດ້ວຍ:

1. ການກ່າວເຕືອນ;
2. ການປັບໃໝ;
3. ການໂຈະ ຫຼື ປົດຕຳແໜ່ງຜູ້ບໍລິຫານ;
4. ການຖອນໃບອະນຸຍາດດຳເນີນທຸລະກິດ ຫຼື ໃບທະບຽນວິສາຫະກິດ.

**ມາດຕາ 3 ການລະເມີດ**

ການລະເມີດຕາມຂໍ້ຕົກລົງສະບັບນີ້ ລວມມີ:

1. ການບໍ່ສ້າງແຜນງານ ຕາມມາດຕາ 19 ຂອງກົດໝາຍວ່າດ້ວຍ ການຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;
2. ການບໍ່ປະຕິບັດຫຼັກການ ປະເມີນ ແລະ ບໍລິຫານ ຄວາມສ່ຽງ ຕາມມາດຕາ 20 ຂອງກົດໝາຍວ່າດ້ວຍ ການຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;
3. ການບໍ່ປະຕິບັດຫຼັກການຊອກຮູ້ລູກຄ້າ ຕາມມາດຕາ 21 ຂອງກົດໝາຍວ່າດ້ວຍ ການຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;
4. ການບໍ່ປະຕິບັດຫຼັກການເພີ່ມທະວີການເອົາໃຈໃສ່ລູກຄ້າ ຕາມມາດຕາ 22 ຂອງກົດໝາຍວ່າດ້ວຍ ການຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;
5. ການບໍ່ປະຕິບັດການເກັບກຳຂໍ້ມູນລະອຽດກ່ຽວກັບລູກຄ້າ ຕາມມາດຕາ 23 ຂອງກົດໝາຍວ່າດ້ວຍການຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;
6. ການບໍ່ປະຕິບັດການເກັບກຳຂໍ້ມູນກ່ຽວກັບທຸລະກຳຂອງລູກຄ້າ ຕາມມາດຕາ 24 ຂອງກົດໝາຍວ່າດ້ວຍ ການຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;
7. ການບໍ່ປະຕິບັດຫຼັກການພົວພັນກັບບຸກຄົນທີ່ມີສະຖານະພາບທາງການເມືອງ ຕາມມາດຕາ 25 ຂອງກົດໝາຍວ່າດ້ວຍ ການຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;
8. ການບໍ່ປະຕິບັດຫຼັກການພົວພັນກັບທະນາຄານຕົວແທນ ຕາມມາດຕາ 26 ຂອງກົດໝາຍວ່າດ້ວຍ ການຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;
9. ການບໍ່ປະຕິບັດການເກັບກຳຂໍ້ມູນການໂອນເງິນ ຕາມມາດຕາ 27 ຂອງກົດໝາຍວ່າດ້ວຍ ການຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;
10. ການບໍ່ປະຕິບັດການເກັບຮັກສາຂໍ້ມູນ ຕາມມາດຕາ 28 ຂອງກົດໝາຍວ່າດ້ວຍ ການຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;
11. ການບໍ່ປະຕິບັດການເລື່ອນທຸລະກຳ ຕາມມາດຕາ 29 ຂອງກົດໝາຍວ່າດ້ວຍ ການຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;
12. ການບໍ່ປະຕິບັດພັນທະໃນການລາຍງານ ຕາມມາດຕາ 30 ຂອງກົດໝາຍວ່າດ້ວຍ ການຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;
13. ການບໍ່ປະຕິບັດພັນທະໃນການລາຍງານທຸລະກຳທີ່ສົງໄສ ຕາມມາດຕາ 31 ຂອງກົດໝາຍວ່າດ້ວຍ ການຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;

14. ການບໍ່ປະຕິບັດການຮັກສາຄວາມລັບຂອງການລາຍງານ ຕາມມາດຕາ 32 ຂອງກົດໝາຍວ່າດ້ວຍ ການຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;
15. ການບໍ່ໃຫ້ການຮ່ວມມືແກ່ພະນັກງານກວດກາ ຂອງສຳນັກງານຂໍ້ມູນຕ້ານການຟອກເງິນ;
16. ການລະເມີດແຈ້ງການຂອງສຳນັກງານຂໍ້ມູນຕ້ານການຟອກເງິນ;
17. ບຸກຄົນ, ນິຕິບຸກຄົນ ລວມທັງຫົວໜ່ວຍທີ່ມີໜ້າທີ່ລາຍງານ ທີ່ມີການລະເມີດ ຄຳແນະນຳວ່າດ້ວຍການນຳໃຊ້ມາດຕະການຊົ່ວຄາວ ຕໍ່ຊັບສິນທີ່ພົວພັນກັບການຟອກເງິນ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສະບັບເລກທີ 08/ຄຕຟງ, ລົງວັນທີ 30 ມີນາ 2016;
18. ການລະເມີດຂໍ້ຫ້າມ ທີ່ໄດ້ກຳນົດໄວ້ໃນ ມາດຕາ 52 ຂອງກົດໝາຍວ່າດ້ວຍ ການຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;
19. ບຸກຄົນ, ນິຕິບຸກຄົນ ລວມທັງຫົວໜ່ວຍທີ່ມີໜ້າທີ່ລາຍງານ ທີ່ມີການລະເມີດ ຄຳສັ່ງ ວ່າດ້ວຍ ການກັກ , ການຍຶດ ແລະ ການອາຍັດ ທຶນທີ່ພົວພັນກັບຜູ້ກໍ່ການຮ້າຍ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສະບັບເລກທີ 03/ນຍ, ລົງວັນທີ 11 ກຸມພາ 2016.

**ມາດຕາ 4 ການປະຕິບັດມາດຕະການ**

ບຸກຄົນ, ນິຕິບຸກຄົນ ລວມທັງຫົວໜ່ວຍທີ່ມີໜ້າທີ່ລາຍງານ ທີ່ໄດ້ລະເມີດຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 3 ຂອງຂໍ້ຕົກລົງສະບັບນີ້ ຈະຖືກປະຕິບັດມາດຕະການ ດັ່ງນີ້:

**1. ການກ່າວເຕືອນ**

ກໍລະນີ ທີ່ເປັນການລະເມີດ ຕາມທີ່ໄດ້ກຳນົດໄວ້ໃນ ຂໍ້ທີ 1 ຫາ 17 ມາດຕາ 3 ຂອງຂໍ້ຕົກລົງສະບັບນີ້ ຈະຖືກກ່າວເຕືອນເປັນລາຍລັກອັກສອນ.

**2. ການປັບໃໝ**

ກໍລະນີ ທີ່ເປັນການລະເມີດ ຕາມທີ່ໄດ້ກຳນົດໄວ້ໃນ ຂໍ້ທີ 18 ແລະ 19 ມາດຕາ 3 ຂອງຂໍ້ຕົກລົງສະບັບນີ້ ຫຼື ກໍລະນີ ທີ່ຖືກປະຕິບັດມາດຕະການກ່າວເຕືອນ ຕາມທີ່ໄດ້ກຳນົດໄວ້ໃນ ຂໍ້ທີ 1 ຂອງມາດຕານີ້ແລ້ວ ແຕ່ຍັງສືບຕໍ່ລະເມີດ ຈະຖືກປັບໃໝ ດັ່ງນີ້:

2.1. ປັບໃໝບຸກຄົນ ລວມທັງຜູ້ບໍລິຫານ ແຕ່ 1.000.000 ກີບ ຫາ 10.000.000 ກີບ;

2.2. ປັບໃໝນິຕິບຸກຄົນ ລວມທັງຫົວໜ່ວຍທີ່ມີໜ້າທີ່ລາຍງານ ໃນອັດຕາ 0.0001% ຂອງຊັບສິນທັງໝົດຂອງຫົວໜ່ວຍທີ່ມີໜ້າທີ່ລາຍງານ ໃນເວລາທີ່ລະເມີດ, ແຕ່ຕໍ່າສຸດບໍ່ໃຫ້ຫຼຸດ 3.000.000 ກີບ ແລະ ສູງສຸດບໍ່ໃຫ້ເກີນ 200.000.000 ກີບ.

**3. ການໂຈະ ຫຼື ປົດຕຳແໜ່ງຜູ້ບໍລິຫານ, ການຖອນໃບອະນຸຍາດດຳເນີນທຸລະກິດ ຫຼື ໃບທະບຽນວິສາຫະກິດ**

ກໍລະນີ ທີ່ໄດ້ປະຕິບັດມາດຕະການທີ່ໄດ້ກຳນົດໄວ້ໃນ ຂໍ້ທີ 2 ຂອງມາດຕານີ້ແລ້ວ ແຕ່ຍັງສືບຕໍ່ລະເມີດ, ຫົວໜ່ວຍທີ່ມີໜ້າທີ່ລາຍງານ ຈະຖືກປະຕິບັດມາດຕະການ ດັ່ງນີ້:

3.1. ໂຈະ ຫຼື ປົດຕຳແໜ່ງຜູ້ບໍລິຫານ;

3.2. ຖອນໃບອະນຸຍາດດຳເນີນທຸລະກິດ ຫຼື ໃບທະບຽນວິສາຫະກິດ ແລະ ຈະສົ່ງໃຫ້ອົງການທີ່ມີສິດອຳນາດດຳເນີນຄະດີຕາມກົດໝາຍ.

**ມາດຕາ 5 ຮູບການປະຕິບັດມາດຕະການ**

ການປະຕິບັດມາດຕະການທາງບໍລິຫານຕໍ່ ບຸກຄົນ, ນິຕິບຸກຄົນ ລວມທັງຫົວໜ່ວຍທີ່ມີໜ້າທີ່ລາຍງານ ຕ້ອງເຮັດເປັນລາຍລັກອັກສອນ ຊຶ່ງຕ້ອງປະກອບມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ຊື່ບຸກຄົນ, ນິຕິບຸກຄົນ ຫຼື ຫົວໜ່ວຍທີ່ມີໜ້າທີ່ລາຍງານ;
2. ເນື້ອໃນຂອງການລະເມີດ;
3. ມາດຕະການທີ່ນໍາໃຊ້;
4. ກໍານົດເວລາໃນການປັບປຸງແກ້ໄຂ;
5. ມາດຕະການໃນຕໍ່ໜ້າ ຫາກສືບຕໍ່ມີການລະເມີດ.

**ມາດຕາ 6 ການຮ້ອງຂໍ**

ບຸກຄົນ, ນິຕິບຸກຄົນ ລວມທັງຫົວໜ່ວຍທີ່ມີໜ້າທີ່ລາຍງານ ທີ່ຖືກປະຕິບັດມາດຕະການ ຕາມທີ່ໄດ້ກໍານົດໄວ້ໃນຂໍ້ຕົກລົງສະບັບນີ້ ຫາກເຫັນວ່າການປະຕິບັດມາດຕະການຕໍ່ຕົນບໍ່ຖືກຕ້ອງ ສາມາດຮ້ອງຂໍເປັນລາຍລັກອັກສອນ ໄປຍັງຄະນະກໍາມະການແຫ່ງຊາດ ເພື່ອຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ເພື່ອພິຈາລະນາ ພາຍໃນ 7 ວັນ ລັດຖະການ ນັບແຕ່ມື້ທີ່ໄດ້ຮັບຂໍ້ຕົກລົງ ວ່າດ້ວຍ ການນໍາໃຊ້ມາດຕະການເປັນຕົ້ນໄປ. ຄະນະກໍາມະການແຫ່ງຊາດ ເພື່ອຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຕ້ອງພິຈາລະນາຄໍາຮ້ອງດັ່ງກ່າວ ແລະ ແຈ້ງຕອບຜູ້ຮ້ອງຂໍ ພາຍໃນ 15 ວັນ ລັດຖະການ ນັບແຕ່ມື້ທີ່ໄດ້ຮັບຄໍາຮ້ອງຂໍເປັນຕົ້ນໄປ.

**ມາດຕາ 7 ການຈັດຕັ້ງປະຕິບັດ**

ມອບໃຫ້ສໍານັກງານຂໍ້ມູນຕ້ານການຟອກເງິນ ເປັນຜູ້ຈັດຕັ້ງປະຕິບັດມາດຕະການຕ່າງໆ ຕໍ່ຫົວໜ່ວຍທີ່ມີໜ້າທີ່ລາຍງານ ລວມທັງຜູ້ບໍລິຫານຂອງຫົວໜ່ວຍທີ່ມີໜ້າທີ່ລາຍງານດັ່ງກ່າວ. ສໍາລັບບຸກຄົນ ແລະ ນິຕິບຸກຄົນ ທົ່ວໄປແມ່ນມອບໃຫ້ເຈົ້າໜ້າທີ່ ກະຊວງປ້ອງກັນຄວາມສະຫງົບ ເປັນຜູ້ປະຕິບັດມາດຕະການ.

ບຸກຄົນ, ນິຕິບຸກຄົນ ລວມທັງຫົວໜ່ວຍທີ່ມີໜ້າທີ່ລາຍງານ ມີໜ້າທີ່ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

ສໍາລັບບຸກຄົນ ທີ່ເປັນພະນັກງານ ຫຼື ເຈົ້າໜ້າທີ່ຂອງລັດ ຫາກມີການລະເມີດ ແມ່ນໃຫ້ປະຕິບັດວິໄນ ຕາມລະບຽບລັດຖະກອນ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 8 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບຕັ້ງແຕ່ວັນລົງລາຍເຊັນ ແລະ ພາຍຫຼັງທີ່ໄດ້ລົງຈົດໝາຍເຫດທາງລັດຖະການ 15 ວັນ.

**ປະທານຄະນະກໍາມະການແຫ່ງຊາດ ເພື່ອຕ້ານ**
**ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ**

ປະທານ

ດຣ.ບຸນປອນ ບຸດຕະນະວົງ